# ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ** ........ 1

ມາດຕາ 1 ຈຸດປະສົງ ........ 1

ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດແຂວງ ........ 1

ມາດຕາ 3 ການອະທິບາຍຄໍາສັບ ........ 1

ມາດຕາ 4 ນະໂຍບາຍຂອງລັດ ........ 2

ມາດຕາ 5 ຫຼັກການ ........ 2

ມາດຕາ 6 ພັນທະຕໍ່ ກອງທຶນຄຸ້ມຄອງໄພພິບັດ ........ 2

ມາດຕາ 7 ຂອບເຂດການນໍາໃຊ້ ........ 3

**ໝວດທີ 2 ແຫຼ່ງລາຍຮັບກອງທຶນ** ........ 3

ມາດຕາ 8 ແຫຼ່ງລາຍຮັບຂອງກອງທຶນ ........ 3

ມາດຕາ 9 ການຈັດເກັບລາຍຮັບ ........ 3

**ໝວດທີ 3 ການຄຸ້ມຄອງ ແລະ ການນໍາໃຊ້ກອງທຶນ** ........ 4

ມາດຕາ 10 ການຄຸ້ມຄອງລາຍຮັບ ........ 4

ມາດຕາ 11 ການຄຸ້ມຄອງລາຍຈ່າຍ ........ 4

ມາດຕາ 12 ການສະຫຼຸບລາຍຮັບ-ລາຍຈ່າຍ ........ 5

ມາດຕາ 13 ການນໍາໃຊ້ຮ່ອງເງິນຈາກການຈັດເກັບລາຍຮັບ ........ 5

ມາດຕາ 14 ເປົ້າໝາຍການນໍາໃຊ້ກອງທຶນ ........ 5

ມາດຕາ 15 ການຊ່ວຍເຫຼືອສຸກເສີນ ........ 5

ມາດຕາ 16 ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ ........ 6

ມາດຕາ 17 ການປະເມີນ ແລະ ການບໍລິການ ........ 6

**ໝວດທີ 4 ເງື່ອນໄຂ ແລະ ຮູບແບບ ໄດ້ຮັບການຊ່ວຍເຫຼືອ** ........ 6

ມາດຕາ 18 ເງື່ອນໄຂໄດ້ຮັບການຊ່ວຍເຫຼືອ ........ 6

ມາດຕາ 19 ການປະກອບເອກະສານເພື່ອຂໍການຊ່ວຍເຫຼືອ ........ 6

ມາດຕາ 20 ຂັ້ນຕອນການຄົ້ນຄ້ວາພິຈາລະນາການຊ່ວຍເຫຼືອ ........ 6

ມາດຕາ 21 ຂັ້ນຕອນປະຕິບັດການຊ່ວຍເຫຼືອ ........ 7




ສແກນດ້ວຍ CamScanner

**ໝວດທີ 5 ອົງການຄຸ້ມຄອງກອງທຶນ** ........................................7
ມາດຕາ 22 ອົງການຄຸ້ມຄອງໄພພິບັດແຂວງ........................................7
ມາດຕາ 23 ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງບໍລິຄຳໄຊ ........................................7
ມາດຕາ 24 ສິດ, ໜ້າທີ່ ຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ........................................7
ມາດຕາ 25 ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ........................................8
ມາດຕາ 26 ສິດ, ໜ້າທີ່ ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ........................................8
ມາດຕາ 27 ກອງປະຊຸມຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ........................................8
**ໝວດທີ 6 ຂໍ້ຫ້າມ** ........................................9
ມາດຕາ 28 ຂໍ້ຫ້າມທົ່ວໄປ........................................9
ມາດຕາ 29 ຂໍ້ຫ້າມສຳລັບຄະນະຮັບຜິດຊອບກອງທຶນ ........................................9
ມາດຕາ 30 ຂໍ້ຫ້າມສຳລັບຜູ້ປະສົບໄພພິບັດ........................................9
**ໝວດທີ 7 ອົງການກວດກາ** ........................................9
ມາດຕາ 31 ອົງການກວດກາກອງທຶນຄຸ້ມຄອງໄພພິບັດແຂວງ........................................9
ມາດຕາ 32 ເນື້ອໃນການກວດກາ........................................10
ມາດຕາ 33 ຮູບການກວດກາ ........................................10
**ໝວດທີ 8 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ** ........................................10
ມາດຕາ 34 ນະໂຍບາຍຕໍ່ຜູ້ມີຜົນງານ ........................................10
ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ ........................................10
ມາດຕາ 36 ມາດຕະການສຶກສາອົບຮົມ ........................................10
ມາດຕາ 37ມາດຕະການທາງວິໄນ ........................................11
ມາດຕາ 38ມາດຕະການທາງແພ່ງ........................................11
ມາດຕາ 39ມາດຕະການທາງອາຍາ........................................11
**ໝວດທີ 9 ບົດບັນຍັດສຸດທ້າຍ** ........................................11
ມາດຕາ 40 ການຈັດຕັ້ງປະຕິບັດ........................................11
ມາດຕາ 41 ຜົນສັກສິດ........................................11



สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ

ສະພາປະຊາຊົນແຂວງ

ເລກທີ...76...../ສພຂ.ຂບຊ

ບໍລິຄໍາໄຊ, ວັນທີ ໑໔.. ສິງຫາ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄໍາໄຊ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 11 ກ່ຽວກັບການພິຈາລະນາ ແລະ ຮັບຮອງເອົານິຕິກໍາທີ່ສໍາຄັນຂອງທ້ອງຖິ່ນ.
- ອີງຕາມ ໃບສະເໜີຂອງອົງການປົກຄອງແຂວງ ສະບັບເລກທີ 63/ຂບຊ, ລົງວັນທີ 26 ກໍລະກົດ 2024.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງບໍລິຄໍາໄຊ ຊຸດທີ II ໄດ້ຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງຂໍ້ຕົກລົງ ຂອງທ່ານເຈົ້າແຂວງບໍລິຄໍາໄຊ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 31 ກໍລະກົດ 2024.

## ກອງປະຊຸມສະພາປະຊາຊົນແຂວງ ຕົກລົງ:

ມາດຕາ 1: ຮັບຮອງເອົາຂໍ້ຕົກລົງ ຂອງທ່ານເຈົ້າແຂວງບໍລິຄໍາໄຊ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2: ມອບໃຫ້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ປະກາດໃຊ້ຢ່າງເປັນທາງການ.

ມາດຕາ 3: ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງບໍລິຄໍາໄຊ

สแกนด้วย CamScanner

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ເລກທີ...601.../ຂບຊ

ບໍລິຄຳໄຊ, ວັນທີ 06 ກັນຍາ 2024

# ຂໍ້ຕົກລົງ
## ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ລບ, ລົງວັນທີ 24 ທັນວາ 2020;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງສະໄໝສາມັນເທື່ອທີ 7 ສະບັບເລກທີ 76/ສພຂ.ຂບຊ, ລົງວັນທີ 14 ສິງຫາ 2024 ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄຳໄຊ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງ.

### ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບການຈັດຕັ້ງຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ເພື່ອລະດົມທຶນ ແລະ ສະສົມທຶນຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ສະໜອງທຶນໃຫ້ແກ່ການຊ່ວຍເຫຼືອສຸກເສີນ, ສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ, ການຊອກຄົ້ນ, ຄົ້ນຫາ ແລະ ຟື້ນຟູ ຮັບປະກັນໃຫ້ຊີວິດການເປັນຢູ່ຂອງປະຊາຊົນຜູ້ປະສົບໄພພິບັດປອດໄພ ແລະ ດີກວ່າເກົ່າ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາແຂວງບໍລິຄຳໄຊ.

**ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ**

ກອງທຶນຄຸ້ມຄອງໄພພິບັດ ແມ່ນກອງທຶນຂອງແຂວງບໍລິຄຳໄຊ ທີ່ຕັ້ງຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ສ້າງຕັ້ງຂຶ້ນເພື່ອລະດົມ ແລະ ສະສົມທຶນ ນຳໃຊ້ເຂົ້າໃນການຊ່ວຍເຫຼືອບັນເທົາທຸກຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດ ເຊັ່ນ: ໄພພິບັດທີ່ເກີດຂຶ້ນໂດຍທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້ :

1. **ກອງທຶນ** ໝາຍເຖິງ ການສະສົມເງິນ ແລະ ວັດຖຸ ທີ່ໄດ້ຈາກຫຼາຍພາກສ່ວນ ເພື່ອຮັບໃຊ້ເຂົ້າໃນວຽກງານໄພພິບັດ;

2. **ການຄຸ້ມຄອງ** ໝາຍເຖິງການປົກປັກຮັກສາເງິນ ແລະ ວັດຖຸ ເພື່ອນຳໃຊ້ໃຫ້ຖືກຕາມເປົ້າໝາຍ;

3. **ໄພພິບັດ** ໝາຍເຖິງເຫດການທີ່ເປັນອັນຕະລາຍຮ້າຍແຮງ ທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ເປັນວົງກວ້າງ ເຊິ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ, ພື້ນຖານໂຄງລ່າງ ແລະ ການດຳລົງຊີວິດຂອງຄົນໃນສັງຄົມ ທັງໄລຍະສັ້ນ ແລະ ໄລຍະຍາວ;

4. **ໄພພິບັດທາງທຳມະຊາດ** ໝາຍເຖິງເຫດການ, ປາກົດການ ແລະ ການປ່ຽນແປງທາງທຳມະຊາດ ເປັນຕົ້ນ ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ລົມພາຍຸ, ໄພໜາວ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດ, ພະຍາດລະບາດ;

5. **ໄພພິບັດທີ່ມະນຸດສ້າງຂຶ້ນ** ໝາຍເຖິງເຫດການສຸກເສີນ ແລະ ອັນຕະລາຍທາງດ້ານສິ່ງແວດລ້ອມ ເນື່ອງຈາກການກະທຳຂອງມະນຸດ ເປັນຕົ້ນ ອັກຄີໄພ, ໄຟໄໝ້ລາມປ່າ, ຝຸ່ນລະອອງ, ກຳມັນຕະພາບລັງສີ, ສານເຄມີຮົ່ວໄຫຼ, ລະເບີດຕົກຄ້າງທີ່ຍັງບໍ່ທັນແຕກ, ອຸບປະຕິໄພ;

6. **ການຊ່ວຍເຫຼືອສຸກເສີນ** ໝາຍເຖິງການໃຫ້ການຊ່ວຍເຫຼືອອັນຮີບດ່ວນທັນທີທັນໃດໃຫ້ຜູ້ກຳລັງປະສົບໄພ;

7. **ກອງທຶນທີ່ໃຊ້ໃນການຊ່ວຍເຫຼືອ** ໝາຍເຖິງເງິນ, ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ;

8. **ການປຸກລະດົມທຶນ** ໝາຍເຖິງລາຍຮັບທີ່ເປັນເງິນສົດ ຫຼື ວັດຖຸ ທີ່ໄດ້ຮັບຈາກການປະກອບສ່ວນຂອງທົ່ວສັງຄົມ, ການອອກແຈ້ງການ, ບັດແຜ່ປັດໄຈຂອງການນຳ ແລະ ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ;

9. **ລາຍຮັບອື່ນໆ** ໝາຍເຖິງລາຍຮັບທີ່ໄດ້ມາຈາກການຈັດກິດຈະກຳລະດົມທຶນໃນຮູບແບບໃດໜຶ່ງ ທີ່ໄດ້ຮັບການອະນຸຍາດຈາກການນຳ ແລະ ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງ ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນທັງພາກລັດ ແລະ ເອກະຊົນພາຍໃນແຂວງ ປະກອບສ່ວນເຂົ້າໃນກອງທຶນຄຸ້ມຄອງໄພພິບັດ ຖືສຳຄັນໃນການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດໃຫ້ມີປະສິດທິພາບ ປະສິດທິຜົນ ແລະ ມີຄວາມຍືນຍົງ, ສ້າງເງື່ອນໄຂອຳນວຍຄວາມສະດວກໃນການສະໜອງງົບປະມານ, ພາຫະນະ, ອຸປະກອນ, ບຸກຄະລາກອນ ໃຫ້ແກ່ການເຄື່ອນໄຫວວຽກງານກອງທຶນຄຸ້ມຄອງໄພພິບັດ.

**ມາດຕາ 5 ຫຼັກການ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;
4. ມີການກວດກາ ແລະ ກວດສອບຢ່າງເປັນປົກກະຕິ ຕາມກົດໝາຍ;
5. ຮັບປະກັນການມີສ່ວນຮ່ວມ ແລະ ປະສານສົມທົບຂອງທຸກພາກສ່ວນໃນແຂວງບໍລິຄຳໄຊ.

**ມາດຕາ 6 ພັນທະຕໍ່ ກອງທຶນຄຸ້ມຄອງໄພພິບັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຢູ່ພາຍໃນແຂວງບໍລິຄຳໄຊ ມີພັນທະໃນການປະກອບສ່ວນເປັນເງິນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ແລະ ຂໍ້ 3 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຫຼື ອາດຈະປະກອບສ່ວນເປັນວັດຖຸກໍໄດ້.



ສແກນດ້ວຍ CamScanner

**ມາດຕາ 7 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ເຄື່ອນໄຫວຢູ່ໃນແຂວງບໍລິຄຳໄຊ.

## ໝວດທີ 2
## ແຫຼ່ງລາຍຮັບກອງທຶນ

**ມາດຕາ 8 ແຫຼ່ງລາຍຮັບຂອງກອງທຶນ**

ແຫຼ່ງລາຍຮັບຂອງກອງທຶນຄຸ້ມຄອງໄພພິບັດ ຕົ້ນຕໍມີດັ່ງນີ້:

1. ງົບປະມານແຫ່ງລັດຕາມການຈັດສັນງົບປະມານປະຈຳປີ ຮ່ວງເງິນແຮສຸກເສີນຂອງແຂວງ ຕາມການອະນຸມັດຂອງອົງການປົກຄອງແຂວງ ແຕ່ລະປີ;

2. ລາຍຮັບຈາກການປະກອບສ່ວນເປັນພັນທະ ມີດັ່ງນີ້:

- 10.000 ກີບຕໍ່ຄອບຄົວຕໍ່ປີ (ຍົກເວັ້ນຄອບຄົວທຸກຍາກ-ອານາຖາ);
- ຂົງເຂດການເມືອງ, ຂົງເຂດວັດທະນະທຳ-ສັງຄົມ, ຂົງເຂດສານ ໄອຍະການ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ພາກສ່ວນລະ 150.000 ກີບຕໍ່ປີ, ຂັ້ນເມືອງພາກສ່ວນລະ 50.000ກີບຕໍ່ປີ;
- ຂົງເຂດເສດຖະກິດ, ກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ພາກສ່ວນລະ 300.000 ກີບຕໍ່ປີ, ຂັ້ນເມືອງພາກສ່ວນລະ 100.000 ກີບຕໍ່ປີ;
- ວິສາຫະກິດຫຸ້ນສ່ວນ ພາກສ່ວນລະ 500.000 ກີບຕໍ່ທະບຽນຕໍ່ປີ;
- ວິສາຫະກິດຂອງລັດ ພາກສ່ວນລະ 400.000 ກີບຕໍ່ທະບຽນຕໍ່ປີ;
- ບໍລິສັດຈຳກັດ ພາກສ່ວນລະ 300.000 ກີບຕໍ່ທະບຽນຕໍ່ປີ;
- ບໍລິສັດຈຳກັດຜູ້ດຽວ ພາກສ່ວນລະ 200.000 ກີບຕໍ່ທະບຽນຕໍ່ປີ;
- ວິສາຫະກິດສ່ວນບຸກຄົນ ພາກສ່ວນລະ 100.000 ກີບຕໍ່ທະບຽນຕໍ່ປີ;

3. ລາຍຮັບຈາກການລະດົມທຶນ (ປະກອບສ່ວນ) ໄລຍະເກີດໄພພິບັດສຸກເສີນຮີບດ່ວນ;

4. ດອກເບ້ຍເງິນຝາກກອງທຶນຄຸ້ມຄອງໄພພິບັດຢູ່ທະນາຄານທີ່ດຳເນີນທຸລະກິດຢູ່ແຂວງບໍລິຄຳໄຊ;

5. ລາຍຮັບອື່ນໆທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 9 ການຈັດເກັບລາຍຮັບ**

ການຈັດເກັບລາຍຮັບມອບໃຫ້ພາກສ່ວນກ່ຽວຂ້ອງຈັດເກັບດັ່ງນີ້:

1. ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ໂດຍແມ່ນພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງເປັນໃຈກາງໃນການຈັດເກັບພັນທະຈາກບັນດາພະແນກການຂັ້ນແຂວງ, ພາຍຫຼັງສັງລວມລາຍຮັບຈາກແຂວງ ແລະ ເມືອງແລ້ວຫັກໄວ້ 1 ສ່ວນຮ້ອຍ (1%) ຂອງມູນຄ່າທັງໝົດ, ຫຼັງຈາກນັ້ນມອບເຂົ້າກອງທຶນຄຸ້ມຄອງໄພພິບັດຕາມລະບຽບການພາຍໃນງວດສອງຂອງທຸກໆປີ;

2. ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ໂດຍແມ່ນຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງເປັນໃຈກາງ ໃນການຈັດເກັບພັນທະຈາກບັນດາສຳນັກງານຫ້ອງການຂັ້ນເມືອງ ພ້ອມນີ້ ຍັງເຮັດໜ້າທີ່ເກັບພັນທະຈາກຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດຢູ່ເມືອງຂອງຕົນ ແລ້ວສັງລວມລາຍຮັບຈາກບ້ານ ແລະ ເມືອງແລ້ວຫັກໄວ້ 3 ສ່ວນຮ້ອຍ (3%) ຂອງມູນຄ່າທັງໝົດ, ຫຼັງຈາກນັ້ນສົ່ງໃຫ້ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງພາຍໃນງວດໜຶ່ງ ຂອງທຸກໆປີ;



ສແກນດ້ວຍ CamScanner

3. ອົງການປົກຄອງບ້ານເປັນຜູ້ຈັດເກັບພັນທະຈາກຄອບຄົວທີ່ດຳລົງຊີວິດຢູ່ບ້ານຂອງຕົນ, ຫັກໄວ້ຂັ້ນບ້ານ 10 ສ່ວນຮ້ອຍ (10%) ຂອງມູນຄ່າທີ່ຈັດເກັບໄດ້ ແລ້ວມອບໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ພາຍໃນເດືອນມັງກອນຂອງທຸກໆປີ.

## ໝວດທີ 3
## ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນ

### ມາດຕາ 10 ການຄຸ້ມຄອງລາຍຮັບ

ການຄຸ້ມຄອງລາຍຮັບກອງທຶນຄຸ້ມຄອງໄພພິບັດ ມີດັ່ງນີ້:

1. ການຄຸ້ມຄອງລາຍຮັບ ແມ່ນເປີດບັນຊີຢູ່ບັນຊີຄັງເງິນປະຈຳແຂວງ ແລະ ທະນາຄານທຸລະກິດທີ່ມີຄວາມໝັ້ນຄົງ ຕາມການຕົກລົງຂອງຄະນະຮັບຜິດຊອບກອງທຶນແຂວງ;

2. ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ (ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ) ສາມາດມອບເງິນເຂົ້າກອງທຶນຄຸ້ມຄອງໄພພິບັດແຂວງ ໄດ້ສອງວິທີ ດັ່ງນີ້:

- ມອບໂດຍກົງໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ;
- ມອບເຂົ້າບັນຊີຄັງເງິນປະຈຳແຂວງ ຫຼື ບັນຊີທະນາຄານທຸລະກິດທີ່ກອງທຶນມີບັນຊີ;

ການມອບເງິນແຕ່ລະຄັ້ງ ຕ້ອງປະຕິບັດຕາມຫຼັກການ-ການເງິນ ແລະ ມອບໃຫ້ສຳເລັດກ່ອນວັນທີ 31 ມີນາ ຂອງແຕ່ລະປີ ແລະ ພາຍຫຼັງມອບແລ້ວ ໃຫ້ແຈ້ງກອງເລຂາຄະນະຮັບຜິດຊອບກອງທຶນ ເພື່ອຕິດຕາມກວດກາ ແລະ ຄຸ້ມຄອງ;

3. ລາຍຮັບເປັນວັດຖຸ ສາມາດມອບໄດ້ ດັ່ງນີ້:

ລາຍຮັບເປັນວັດຖຸ ມອບໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນແຂວງ ເກັບຮັກສາໄວ້ຢູ່ສາງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ສາງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ໂດຍມີເອກະສານຢັ້ງຢືນການຮັບຢ່າງຖືກຕ້ອງ ແລະ ມີບັນຊີຕິດຕາມລາຍຮັບ ເພື່ອຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ.

### ມາດຕາ 11 ການຄຸ້ມຄອງລາຍຈ່າຍ

ການຄຸ້ມຄອງລາຍຈ່າຍຂັ້ນແຂວງ ມີດັ່ງນີ້:

1. ຜູ້ທີ່ມີສິດລົງລາຍເຊັນໃນການສັ່ງຈ່າຍ ໂດຍຕຳແໜ່ງດັ່ງນີ້:
   1) ປະທານ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ;
   2) ຮອງປະທານ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ;
   3) ຫົວໜ້າກອງເລຂາ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ.

2. ການຖອນເງິນຈາກບັນຊີເງິນຝາກກອງທຶນ ແຕ່ລະຄັ້ງຕ້ອງມີສອງໃນສາມລາຍເຊັນຂອງຜູ້ມີສິດສັ່ງຈ່າຍຕາມແບບພິມລາຍເຊັນຈຶ່ງສາມາດຖອນໄດ້ ແລະ ຈຳນວນເງິນທີ່ຖອນຕ້ອງບໍ່ໃຫ້ເກີນ ເຈັດສິບສ່ວນຮ້ອຍ (70%) ຂອງເງິນກອງທຶນຢູ່ໃນບັນຊີ ແລະ ແຮໄວ້ ສາມສິບສ່ວນຮ້ອຍ (30%) ຂອງກອງທຶນ;

3. ການເບີກຈ່າຍວັດຖຸແຕ່ລະຄັ້ງຕ້ອງໄດ້ຮັບອະນຸຍາດ ແລະ ມີລາຍເຊັນສັ່ງຈ່າຍຂອງປະທານ ຫຼື ຮອງປະທານ, ຕ້ອງມີການຢັ້ງຢືນການຮັບເຄື່ອງ ແລະ ນຳສົ່ງເຄື່ອງ ຕາມແບບພິມຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;



สแกนด้วย CamScanner

4. ໃນກໍລະນີສຸກເສີນ ແມ່ນຜູ້ທີ່ຖືກມອບສິດ ຈາກປະທານຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ ສາມາດສັ່ງຈ່າຍກອງທຶນໂດຍກົງ ເຂົ້າໃນການຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ; ແຕ່ພາຍຫຼັງສໍາເລັດແລ້ວຕ້ອງລາຍງານ ປະທານ.

**ມາດຕາ 12 ການສະຫຼຸບລາຍຮັບ-ລາຍຈ່າຍ**

ການສະຫຼຸບລາຍຮັບ-ລາຍຈ່າຍທຸກຄັ້ງ ເປັນເງິນ, ວັດຖຸ ຕ້ອງມີການຈົດເຂົ້າ, ຈົດອອກ, ລົງບັນຊີຖືກຕ້ອງຕາມລະບົບບັນຊີຂອງກະຊວງການເງິນວາງອອກແຕ່ລະໄລຍະ ສາມາດກວດສອບໄດ້ ແລະ ລາຍງານຄະນະຮັບຜິດຊອບກອງທຶນໄພພິບັດແຂວງ ເປັນເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ໜຶ່ງປີ ເປັນປົກກະຕິ.

**ມາດຕາ 13 ການນໍາໃຊ້ຮ່ວງເງິນຈາກການຈັດເກັບລາຍຮັບ**

ການນໍາໃຊ້ເງິນຮ່ວງຈັດເກັບລາຍຮັບຈາກການປະກອບສ່ວນເປັນພັນທະອະນຸຍາດໃຫ້ນໍາໃຊ້ດັ່ງນີ້:

1. ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ນໍາໃຊ້ຮ່ວງ 1 ສ່ວນຮ້ອຍ (1%) ທີ່ກໍານົດໃນມາດຕາ 9 ໃນການຈັດກອງປະຊຸມປະຈໍາປີ ຫຼື ສຸກເສີນກ່ຽວກັບໄພພິບັດ ແລະ ວຽກບໍລິຫານທີ່ກ່ຽວຂ້ອງ;

2. ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ ນໍາໃຊ້ຮ່ວງ 3 ສ່ວນຮ້ອຍ (3%) ທີ່ກໍານົດໃນມາດຕາ 9 ລົງເກັບກໍາຂໍ້ມູນໄພພິບັດຂັ້ນບ້ານທົ່ວເມືອງ ທີ່ເກີດໄພພິບັດ, ຈັດກອງປະຊຸມປະຈໍາປີ ຫຼື ສຸກເສີນກ່ຽວກັບໄພພິບັດ ແລະ ວຽກບໍລິຫານທີ່ກ່ຽວຂ້ອງ.

3. ອໍານາດການປົກຄອງບ້ານ ນໍາໃຊ້ຮ່ວງ 10 ສ່ວນຮ້ອຍ (10%) ທີ່ກໍານົດໃນມາດຕາ 9 ເກັບກໍາຂໍ້ມູນຄອບຄົວທີ່ຖືກຜົນກະທົບຈາກໄພພິບັດພາຍໃນບ້ານ, ຈັດກອງປະຊຸມປະຈໍາປີ ຫຼື ສຸກເສີນກ່ຽວກັບໄພພິບັດ ແລະ ວຽກບໍລິຫານທີ່ກ່ຽວຂ້ອງ.

ຄະນະຮັບຜິດຊອບແຕ່ລະຂັ້ນ ສະຫຼຸບລາຍຮັບ-ລາຍຈ່າຍ ການນໍາໃຊ້ງົບປະມານ ແລະ ລາຍງານໃຫ້ແກ່ຄະນະຮັບຜິດຊອບກອງທຶນໄພພິບັດແຂວງ ປີລະ 2 ຄັ້ງ.

**ມາດຕາ 14 ເປົ້າໝາຍການນໍາໃຊ້ກອງທຶນ**

ກອງທຶນຄຸ້ມຄອງໄພພິບັດ ນໍາໃຊ້ເຂົ້າໃນ 3 ເປົ້າໝາຍ ດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ;
2. ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ;
3. ການປະເມີນ ແລະ ການບໍລິຫານ.

**ມາດຕາ 15 ການຊ່ວຍເຫຼືອສຸກເສີນ**

ການຊ່ວຍເຫຼືອສຸກເສີນ ແມ່ນການກູ້ໄພ, ການຊອກຄົ້ນ, ຄົ້ນຫາຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ, ການຈັດສັນທີ່ພັກອາໄສຊົ່ວຄາວ, ສະໜອງຜ້າເຕັ້ນ ຫຼື ປຸກສ້າງທີ່ຢູ່ອາໄສຊົ່ວຄາວ, ເຄື່ອງອຸປະໂພກ-ບໍລິໂພກ, ການບໍລິການແພດສຸກເສີນ, ການຈັດຊື້ອຸປະກອນຮັບໃຊ້ທີ່ຈໍາເປັນ, ສາງເກັບມ້ຽນເຄື່ອງ, ການຈັດສົ່ງ, ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ, ການຕັ້ງສູນບັນຊາການສຸກເສີນຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ບ່ອນເກີດໄພພິບັດຕາມຄວາມເໝາະສົມ;

ກໍລະນີການຍົກຍ້າຍໄປຢູ່ເຂດປອດໄພ ຫຼື ຜູ້ທີ່ຖືກຕົກຄ້າງຢູ່ເຂດພື້ນທີ່ໄພພິບັດຈະໄດ້ຮັບການຊ່ວຍ ເຫຼືອເຄື່ອງອຸປະໂພກ, ບໍລິໂພກ ຕາມເງື່ອນໄຂຕົວຈິງ;

ການສ້ອມແປງໂຄງລ່າງພື້ນຖານທີ່ຈໍາເປັນ ແລະ ຮີບດ່ວນ ທີ່ມີຜົນເສຍຫາຍຈາກໄພພິບັດ ທີ່ມີມູນຄ່າບໍ່ເກີນ 30,000,000 ກີບ ຖ້າກອງທຶນມີງົບປະມານພຽງພໍ ກໍສາມາດນໍາໃຊ້ໄດ້ ຕາມການຕົກລົງຂອງຄະນະ



สแกนด้วย CamScanner

ກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເຊັ່ນ: ຖະໜົນຫົນທາງຖືກເຊາະເຈື່ອນ, ດິນຖົມທາງ, ສ້າງຂົວຂ້າມນ້ຳ ບ້ານຫາບ້ານ.

**ມາດຕາ 16 ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ**

ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ ແມ່ນການຊ່ວຍເຫຼືອບຸກຄົນ ແລະ ຫຼັງຄາເຮືອນ ທີ່ໄດ້ຮັບຄວາມເສຍຫາຍຈາກໄພພິບັດ ດັ່ງນີ້:

1. ເສຍຫາຍ 60% ຂຶ້ນໄປ ໄດ້ຮັບການຊ່ວຍເຫຼືອອຸປະກອນສົມທົບປຸກສ້າງ ຫຼື ເປັນເງິນ ຈຳນວນ 5.000.000 ກີບ ຕໍ່ຫຼັງຄາເຮືອນຕໍ່ຄັ້ງ;

2. ໃນກໍລະນີບຸກຄົນ ຫາກເສຍຊີວິດ ຍ້ອນໄພພິບັດທາງທຳມະຊາດ ຈະໄດ້ຮັບການຊ່ວຍເຫຼືອ ເປັນເງິນຈຳນວນ 5.000.000 ກີບ ຕໍ່ຄົນ.

**ມາດຕາ 17 ການປະເມີນ ແລະ ການບໍລິຫານ**

ນຳໃຊ້ງົບປະມານໃນການລົງເກັບກຳຂໍ້ມູນ ແລະ ປະເມີນຜົນເສຍຫາຍຢູ່ເຂດປະສົບໄພພິບັດຮ່ວມກັບຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ, ຂັ້ນບ້ານ.

## ໝວດທີ 4
## ເງື່ອນໄຂ ແລະ ຮູບແບບ ໄດ້ຮັບການຊ່ວຍເຫຼືອ

**ມາດຕາ 18 ເງື່ອນໄຂໄດ້ຮັບການຊ່ວຍເຫຼືອ**

ບຸກຄົນ, ຄອບຄົວ ທີ່ໄດ້ຮັບຜົນເສຍຫາຍ, ເສຍຊີວິດຈາກໄພພິບັດ ທີ່ໄດ້ປະກອບສ່ວນເຂົ້າກອງທຶນ (ຍົກເວັ້ນຄອບຄົວທຸກຍາກ-ອານາຖາ) ໂດຍໄດ້ຮັບການປະເມີນ ແລະ ຮັບຮອງຈາກຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 19 ການປະກອບເອກະສານເພື່ອຂໍການຊ່ວຍເຫຼືອ**

ເອກະສານທີ່ຈະປະກອບຂໍການຊ່ວຍເຫຼືອ ມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງ ຕ້ອງມີການຢັ້ງຢືນຈາກອົງການປົກຄອງບ້ານ;

2. ໃບຢັ້ງຢືນເປັນຄອບຄົວທຸກຍາກ-ອານາຖາຈາກອົງການປົກຄອງບ້ານ;

3. ບົດບັນທຶກຜົນເສຍຫາຍທີ່ເກີດຂຶ້ນ ໂດຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານສົມທົບກັບຂັ້ນເມືອງ ເປັນແຕ່ລະຄອບຄົວ ທີ່ໄດ້ຮັບຜົນເສຍຫາຍດ້ານທີ່ຢູ່ອາໄສ (ຕາມແບບພິມທີ່ກຳນົດໄວ້);

4. ບັນຊີລາຍຊື່ແຕ່ລະຄອບຄົວ ທີ່ຂໍການຊ່ວຍເຫຼືອ ກໍລະນີຫຼາຍບ້ານ ໂດຍໃຫ້ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງສັງລວມ ແລ້ວສົ່ງໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ.

**ມາດຕາ 20 ຂັ້ນຕອນການຄົ້ນຄ້ວາພິຈາລະນາການຊ່ວຍເຫຼືອ**

ກອງເລຂາຄະນະຮັບຜິດຊອບກອງທຶນແຂວງ ຮັບເອກະສານຂໍການຊ່ວຍເຫຼືອ ແລ້ວສັງລວມຂໍ້ມູນຈາກບັນດາເມືອງທີ່ປະສົບໄພພິບັດ ເພື່ອສະເໜີຂໍອະນຸມັດການຊ່ວຍເຫຼືອຈາກປະທານຄະນະກຳມະການຄຸ້ມຄອງໄພພິບັດແຂວງ ພາຍໃນເວລາ 15 ວັນລັດຖະການ; ກໍລະນີສຸກເສີນຮີບດ່ວນ ຄະນະຮັບຜິດຊອບກອງທຶນສາມາດພິຈາລະນາໃຫ້ການຊ່ວຍເຫຼືອໂດຍທັນທີ ຕາມການຮ້ອງຂໍການຊ່ວຍເຫຼືອເບື້ອງຕົ້ນ, ຫຼັງຈາກນັ້ນຈຶ່ງປະກອບເອກະສານຕາມຂັ້ນຕອນພາຍຫຼັງ ເພື່ອໃຫ້ຖືກຕ້ອງຕາມລະບຽບການ.



สแกนด้วย CamScanner

**ມາດຕາ 21 ຂັ້ນຕອນປະຕິບັດການຊ່ວຍເຫຼືອ**

ຂັ້ນຕອນປະຕິບັດການຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ ມີດັ່ງນີ້:

1. ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ສົມທົບກັບຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ, ຂັ້ນບ້ານ ເບີກຈ່າຍໃຫ້ບັນດາເປົ້າໝາຍທີ່ໄດ້ຮັບການຊ່ວຍເຫຼືອ;

2. ການຊ່ວຍເຫຼືອທຸກຄັ້ງ ຕ້ອງມີລາຍເຊັນ ຫຼື ຈ້ຳໂປ້ ຈາກຜູ້ທີ່ໄດ້ຮັບການຊ່ວຍເຫຼືອ ໂດຍໄດ້ຮັບການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

3. ພາຍຫຼັງສຳເລັດການຊ່ວຍເຫຼືອ ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ສະຫຼຸບລາຍງານຕໍ່ປະທານຄະນະກຳມະການຄຸ້ມຄອງໄພພິບັດແຂວງຮັບຊາບ.

## ໝວດທີ 5
## ອົງການຄຸ້ມຄອງກອງທຶນ

**ມາດຕາ 22 ອົງການຄຸ້ມຄອງກອງທຶນໄພພິບັດແຂວງ**

ອົງການຄຸ້ມຄອງກອງທຶນໄພພິບັດແຂວງ ປະກອບມີຄະນະຮັບຜິດຊອບກອງທຶນ ແລະ ກອງເລຂາຄະນະຮັບຜິດຊອບກອງທຶນ.

**ມາດຕາ 23 ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງບໍລິຄຳໄຊ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງທີ່ໄດ້ຮັບການແຕ່ງຕັ້ງຈາກທ່ານເຈົ້າແຂວງ ປະກອບມີບັນດາທ່ານດັ່ງນີ້:

1. ທ່ານ ຮອງເຈົ້າແຂວງ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນປະທານ;
2. ທ່ານ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າພະແນກການເງິນແຂວງ ເປັນຮອງ;
4. ທ່ານ ຮອງຫົວໜ້າຫ້ອງວ່າການແຂວງ ເປັນຄະນະ;
5. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນຄະນະ;
6. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ; ທັງເປັນຫົວໜ້າກອງເລຂາ;
7. ທ່ານ ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;

**ມາດຕາ 24 ສິດ, ໜ້າທີ່ ຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ມີສິດ, ໜ້າທີ່ ຕາມຂອບເຂດຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ພິຈາລະນາແຜນການ ແລະ ແຜນງົບປະມານການເຄື່ອນໄຫວປະຈຳປີ ຂອງກອງເລຂາຄະນະຮັບຜິດຊອບກອງທຶນ;

3. ພິຈາລະນາອະນຸມັດການຊ່ວຍເຫຼືອ, ລົງລາຍເຊັນເບີກຈ່າຍ, ການຖອນເງິນກອງທຶນ ແລະ ການເບີກຈ່າຍວັດຖຸອຸປະກອນ;

4. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;



สแกนด้วย CamScanner

5. ຕິດຕາມ,ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

6. ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານ ໄລຍະຫົກເດືອນ ແລະ ໜຶ່ງປີ ຂອງກອງທຶນໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ;

7. ຮັບຮອງປິດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;

8. ຕິດຕາມກວດກາ ການເຄື່ອນໄຫວຂອງກອງເລຂາຄະນະຮັບຜິດຊອບກອງທຶນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກຳມະການຄຸ້ມຄອງໄພພິບັດແຂວງ.

**ມາດຕາ 25 ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ**

ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ໄດ້ຮັບການແຕ່ງຕັ້ງໂດຍທ່ານ ປະທານກອງທຶນຄຸ້ມຄອງໄພພິບັດແຂວງ ປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຫົວໜ້າ;
2. ທ່ານ ຮອງຫົວໜ້າຄັງເງິນປະຈຳແຂວງ ເປັນຮອງ;
3. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;
4. ພະນັກງານວິຊາການຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;

**ມາດຕາ 26 ສິດ, ໜ້າທີ່ ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ**

ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ, ການລະດົມທຶນເຂົ້າກອງທຶນປະຈຳປີ ເພື່ອສະເໜີຕໍ່ຄະນະຄະນະຮັບຜິດຊອບກອງທຶນ ພິຈາລະນາຮັບຮອງ ແລະ ອະນຸມັດ;

2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານຂອງກອງທຶນໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຈັດກິດຈະກຳເພື່ອລະດົມທຶນເຂົ້າກອງທຶນ;

4. ຄຸ້ມຄອງເງິນສົດ, ວັດຖຸປະກອນ, ບັນຊີເງິນຝາກ ແລະ ຈົດຮັບ-ຈົດຈ່າຍ ຂອງກອງທຶນ;

5. ສະເໜີຂໍອະນຸມັດຖອນເງິນ, ເບີກຈ່າຍເງິນ ແລະ ວັດຖຸປະກອນ ຮັບໃຊ້ໃຫ້ແກ່ວຽກງານການເຄື່ອນໄຫວຂອງກອງທຶນ;

6. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ເງິນກອງທຶນຮ່ວງ 3%, 10% ຂອງບັນດາເມືອງ ແລະ ບັນດາບ້ານ;

7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ຄະນະຮັບຜິດຊອບກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍ ຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ.

**ມາດຕາ 27 ກອງປະຊຸມຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ມີລະບອບປະຊຸມປົກກະຕິ ປີລະສອງຄັ້ງ ເພື່ອສະຫຼຸບຕີລາຄາ ແລະ ວາງແຜນວຽກງານຮອບດ້ານ ໃນໄລຍະຫົກເດືອນ ແລະ ປະຈຳປີ. ນອກຈາກນີ້ ກໍລະນີສຸກເສີນ, ຮີບດ່ວນ ກໍສາມາດຈັດກອງປະຊຸມໄດ້.



สแกนด้วย CamScanner

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາໃສ່ຮ້າຍປ້າຍສີວຽກງານຂອງກອງທຶນຄຸ້ມຄອງໄພພິບັດ;
2. ປະກອບສ່ວນພັນທະເຂົ້າກອງທຶນບໍ່ຖືກຕາມເວລາທີ່ກຳນົດ;
3. ໃຫ້ຂໍ້ມູນ, ລາຍງານຜົນເສຍຫາຍທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
4. ໃຫ້ສິນບົນ, ສົມຮູ້ຮ່ວມຄິດເຈົ້າໜ້າທີ່, ພະນັກງານຄະນະຮັບຜິດຊອບກອງທຶນ;
5. ມີພຶດຕິກຳອື່ນ ທີ່ບໍ່ຖືກຕ້ອງກັບກົດໝາຍ, ລະບຽບການ ແລະ ຂັດກັບຂໍ້ຕົກລົງສະບັບນີ້.

**ມາດຕາ 29 ຂໍ້ຫ້າມສຳລັບຄະນະຮັບຜິດຊອບກອງທຶນ**

ຫ້າມພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ເປັນຄະນະຮັບຜິດຊອບ ແລະ ກອງເລຂາກອງທຶນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ຄອບຄົວ ເພື່ອຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ ເອກະສານໃນການແກ້ໄຂບັນຫາຕ່າງໆກ່ຽວກັບການຄຸ້ມຄອງໄພພິບັດ;
5. ຮຽກເອົາຄ່າທຳນຽມ, ຄ່າບໍລິການທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;
8. ເພີ່ມ ຫຼື ຫຼຸດ ອັດຕາຄ່າຊ່ວຍເຫຼືອ, ນຳໃຊ້ລາຍຮັບຈາກການຄຸ້ມຄອງໄພພິບັດ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 30 ຂໍ້ຫ້າມສຳລັບຜູ້ປະສົບໄພພິບັດ**

ຫ້າມຜູ້ປະສົບໄພພິບັດ ມີພຶດຕະກຳ ດັ່ງນີ້:

1. ລາຍງານຄວາມເສຍຫາຍຂອງຕົນທີ່ບໍ່ຖືກຕ້ອງ ແລະ ບໍ່ມີມູນຄວາມຈິງ;
2. ໃຫ້ຂໍ້ມູນ ຂ່າວສານທີ່ບໍ່ມີມູນຄວາມຈິງ ແລະ ປອມແປງເອກະສານ;
3. ສົມຮູ້ຮ່ວມຄິດກັບພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ບິດເບືອນ, ກ່າວຫາພະນັກງານ, ເຈົ້າໜ້າທີ່ ຫຼື ການຈັດຕັ້ງໂດຍບໍ່ມີມູນຄວາມຈິງ;
5. ມີພຶດຕິກຳອື່ນ ທີ່ເປັນການຂັດຕໍ່ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 7
## ອົງການກວດກາ

**ມາດຕາ 31 ອົງການກວດກາກອງທຶນຄຸ້ມຄອງໄພພິບັດແຂວງ**

ອົງການກວດກາກອງທຶນຄຸ້ມຄອງໄພພິບັດແຂວງ ປະກອບມີ:

ສແກນດ້ວຍ CamScanner

1. ອົງການກວດກາພາຍໃນ.

ອົງການກວດກາພາຍໃນ ແມ່ນອົງການດຽວກັບອົງການຄຸ້ມຄອງກອງທຶນ.

2. ອົງການກວດກາພາຍນອກ:

ອົງການກວດກາພາຍນອກ ປະກອບມີ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນແຂວງ ແລະ ສື່ມວນຊົນ.

## ມາດຕາ 32 ເນື້ອໃນການກວດກາ

ການກວດກາກອງທຶນຄຸ້ມຄອງໄພພິບັດ ມີເນື້ອໃນດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບກອງທຶນ;
2. ແຫຼ່ງລາຍຮັບຂອງກອງທຶນ, ການຈັດຕັ້ງປະຕິບັດແຜນລາຍຈ່າຍ ແລະ ງົບປະມານຄຸ້ມຄອງບໍລິຫານກອງທຶນ;
3. ການປະຕິບັດໜ້າທີ່ຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ ແລະ ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຂວງ.

## ມາດຕາ 33 ຮູບການກວດກາ

ການກວດກາກອງທຶນຄຸ້ມຄອງໄພພິບັດ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

# ໝວດທີ 8
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 34 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັນທະ ດ້ວຍຄວາມສະໝັກໃຈເຂົ້າໃນກອງທຶນຄຸ້ມຄອງໄພພິບັດແຂວງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບກົດໝາຍ.

## ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດ ທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 36 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະແບບເບົາບາງເຊິ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຕ່ຳກວ່າຫ້າແສນກີບລົງມາ ຈະໄດ້ຖືກຕັກເຕືອນ ແລະ ສຶກສາອົບຮົມ.



ສແກນດ້ວຍ CamScanner

**ມາດຕາ 37 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ເຊິ່ງບໍ່ແມ່ນການກະທຳຄວາມຜິດທາງອາຍາຈະຖືກກ່າວເຕືອນຄວາມຜິດ.

ກໍລະນີບໍ່ຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ, ຍົກຍ້າຍໄປຮັບໜ້າທີ່ໃໝ່ທີ່ຕ່ຳກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ, ຜູ້ຖືກປະຕິບັດວິໄນຕ້ອງສົ່ງຊັບສິນຂອງຕົນທີ່ໄດ້ມາໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 38 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ອັນເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະໄດ້ທົດແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 39 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍໃຫ້ແກ່ສິດ, ຜົນປະໂຫຍດລວມໝູ່ຂອງລັດ ແມ່ນຈະຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

ເຈົ້າແຂວງ

ເຈົ້າແຂວງ

ປອ. ສອນທະນູ ທຳມະວົງ

สแกนด้วย CamScanner